Lao - ພຣະຄຳພີເມັງ - Wives Scriptures

ເອເຟໂຊ 5:22-24 ຝ່າຍພັຣຍາ ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ຫມືອນຍອມຟັງອົງ
ພຣະຜູ້ເປັນເຈົ້າ 23 ເພາະວ່າສາມີເປັນສີສະຂອງພັຣຍາ ເຫມືອນພຣະຄຣິດຊົງເປັນປະ
ມຸກຂອງຄຣິສຕະຈັກ ຊຶ່ງເປັນພຣະກາຍຂອງພຣະອົງ ແລະພຣະອົງຊົງເປັນຜູ້ໂຜດໃຫ້ຄ
ຣິສຕະຈັກນັ້ນພົ້ນ 24 ຄຣິສຕະຈັກຍອມຢູ່ໃຕ້ບັງຄັບຂອງພຣະຄຣິດສັນໃດ ພັຣຍາກໍ
ຄວນຍອມຢູ່ໃຕ້ບັງຄັບສາມີຂອງຕົນທຸກປະການສັນນັ້ນ

ເອເຟໂຊ 5:31,33 "ເພາະເຫດນີ້ຜູ້ຊາຍຈົ່ງຈະລະບິດາມານດາຂອງຕົນໄປຜູກພັນກັບພັຣ
ຍາ ແລະເຂົາທັງສອງຈະເປັນກາຍອັນດຽວກັນ" 33 ເຖິງຢ່າງໃດກໍດີ, ພວກທ່ານທຸກຄົນ
ຈົ່ງຮັກພັຣຍາຂອງຕົນເຫມືອນຮັກຕົນເອງ ແລະພັຣຍາກໍຈົ່ງຍຳເກງສາມີຂອງຕົນ

1 ໂກຣິນໂທ 7:3 ພົວຕ້ອງຍອມຮ່ວມຢູ່ກັບເມັຽຕາມສົມຄວນ ແລະເມັຽກໍຕ້ອງຍອມຮ່ວມ
ຢູ່ກັບພົວເຫມືອນກັນ

1 ໂກຣິນໂທ 7:34 ຝ່າຍຍິງທີ່ບໍ່ມີພົວແລະສາວໂສດກໍຮ້ອນໃຈໃນການງານຂອງອົງພຣະຜູ້
ເປັນເຈົ້າ ເພື່ອຈະໄດ້ເປັນຄົນບໍຣິສຸດທັງກາຍແລະຈິດວິນຍານ ແຕ່ຍິງທີ່ມີພົວກໍຮ້ອນ
ໃຈໃນການຂອງໂລກນີ້ ເພື່ອຈະເຮັດໃຫ້ຊອບໃຈຂອງພົວ

ໂກໂລຊາຍ 3:18 ຝ່າຍເມັຽ ຈົ່ງຍອມຟັງພົວຂອງຕົນຊຶ່ງເປັນການສົມຄວນໃນອົງພຣະຜູ້
ເປັນເຈົ້າ

1 ຕິໂມທຽວ 2:11-14 ໃຫ້ຜູ້ຍິງຮຽນຮູ້ຢ່າງງຽບໆ ແລະດ້ວຍໃຈອ່ອນນ້ອມ 12 ເຮົາບໍ່ອະ
ນຸຍາດໃຫ້ຜູ້ຍິງສັ່ງສອນ ຫລືໃຊ້ອຳນາດເຫນືອຜູ້ຊາຍ ແຕ່ໃຫ້ເຂົາມີດຽງບຢູ່ 13
ດ້ວຍວ່າພຣະເຈົ້າໄດ້ຊົງປັ້ນອາດາມຂຶ້ນກ່ອນ ແລ້ວຈຶ່ງຊົງສ້າງເອວາ ແລະອາດາມບໍ່ໄດ້
ຖືກຫລອກລວງ ແຕ່ຜູ້ຍິງໄດ້ຖືກຫລອກລວງຈຶ່ງຕົກໃນການລ່ວງລະເມີດ 14 ແຕ່ເຖິງ
ປານນັ້ນກໍດີ ຜູ້ຍິງຍັງຈະຮັບການຊົງໂຜດໃຫ້ພົ້ນໄດ້ດ້ວຍການເກີດລູກ ຖ້າເຂົາຕັ້ງ
ຫມັ້ນຄົງຢູ່ໃນຄວາມເຊື່ອ ໃນຄວາມຮັກ ແລະໃນຄວາມບໍຣິສຸດ ພ້ອມດ້ວຍຄວາມສ
ງ່ຽມຄ່ຽມຄົມ

ປະຖົມການ 3:16 ແລ້ວພຣະອົງຊົງກ່າວກັບຜູ້ຍິງນັ້ນວ່າ, "ເຮົາຈະເພີ້ມຄວາມຫຍຸ້ງຍາກໃຫ້

ແກ່ເຈົ້າເວລາມີທ້ອງ ແລະຈະໃຫ້ເຈົ້າຄອດບຸດດ້ວຍຄວາມເຈັບປວດ ເຖິງປານນັ້ນເຈົ້າ ກໍຍັງຢາກໄດ້ຜົວຢູ່ ແລະຜົວນັ້ນຈະເປັນນາຍປົກຄອງເບິ່ງແຍງເຈົ້າ”

1 ປໂຕ 3:1,2 ຝ່າຍທ່ານທັງຫລາຍຜູ້ເປັນພັຣຍາກໍເຫມືອນກັນ ຈົ່ງຍອມຟັງສາມີຂອງ ຕົນ ເພື່ອວ່າຖ້າສາມີຜູ້ໃດບໍ່ເຊື່ອຟັງພຣະທັມຂອງພຣະເຈົ້າ ການປະຕິບັດຂອງພັຣຍາ ກໍອາດຈະຈູງໃຈສາມີໄດ້ໂດຍບໍ່ຕ້ອງເວົ້າຈັກຄຳ 2 ຄືເມື່ອສາມີຈະໄດ້ແລະເຫັນການປະຕິ ບັດອັນບໍຣິສຸດ ແລະອ່ອນນ້ອມຂອງພວກທ່ານຜູ້ເປັນພັຣຍາ

ຕິໂຕ 2:1-5 ແຕ່ຝ່າຍເຈົ້າ ຈົ່ງສັ່ງສອນໃນເຫມາະສົມກັບໂອວາດຄຳສອນອັນມີຫລັກ 2 ຄື ຈົ່ງເຕືອນພວກຊາຍທີ່ມີອາຍຸສູງໃຫ້ຮູ້ຈັກບັງຄັບຕົນ ໃຫ້ເປັນຄົນສະງ່າຜ່າເຜີຍ ເປັນ ຄົນມີສະຕິອັນດີຮອບຄອບ ເປັນຄົນມີຄວາມເຊື່ອ ມີຄວາມຮັກ ແລະມີຄວາມອົດທົນ ຕາມສົມຄວນ 3 ຝ່າຍພວກຜູ້ຍິງທີ່ມີອາຍຸສູງນັ້ນກໍເຫມືອນກັນ ຈົ່ງໃຫ້ເຂົາມີກິຣິຍາ ສົມກັບເປັນຄົນຂອງພຣະເຈົ້າ ຢ່າໃຫ້ເປັນຄົນໃຊ້ຄຳນິນທາປມາດ ຫລືເປັນຄົນຕິດ ເຫລົ້າແວງຫລາຍ ແຕ່ໃຫ້ເປັນຜູ້ສອນຄຸນງາມຄວາມດີ 4 ເພື່ອເປັນການແອບສອນ ພວກຜູ້ຍິງທີ່ຍັງຫນຸ່ມໃຫ້ຮັກຜົວ ແລະລູກຂອງຕົນ 5 ໃຫ້ເປັນຄົນມີສະຕິອັນດີຮອບ ຄອບ ເປັນຄົນບໍຣິສຸດ ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ ເປັນຄົນມີໃຈເມດ ຕາ ແລະເປັນຄົນນ້ອຍເຊື່ອຟັງຜົວຂອງຕົນ ເພື່ອພຣະທັຍຂອງພຣະເຈົ້າຈະບໍ່ຖືກ ປມາດ

ສຸພາສິດ 12:4 ເມັຽດີເປັນມົງກຸດຂອງຜົວຕົນ ແຕ່ນາງຜູ້ທີ່ນຳຄວາມອັບອາຍມາກໍ ເຫມືອນຄວາມເນົ່າເປື່ອຍໃນກະດູກຜົວ

ສຸພາສິດ 14:1 ປັນຍາສ້າງເຮືອນຂອງນາງຂຶ້ນ ແຕ່ຄວາມໂງ່ມ້າງມັນລົງດ້ວຍມືຂອງຕົນ

ສຸພາສິດ 19:13 ບຸດໂງ່ຈ້າເປັນຄວາມພິນາດຂອງບິດາຂອງເຂົາ ແລະການທະເລາະວິວາດ ຂອງເມັຽກໍເຫມືອນນ້ຳຜົນຍ້ອຍຍົດບໍ່ຢຸດ

ສຸພາສິດ 21:9,19 ຢູ່ທີ່ແຈມຸມເທິງຫລັງຄາເຮືອນດີກວ່າຢູ່ໃນເຮືອນຮ່ວມກັບຍິງທີ່ຈູ້ຈີ້ 19 ຢູ່ໃນແຜ່ນດິນກັນດານ ດີກວ່າຢູ່ກັບຜູ້ຍິງທີ່ຈູ້ຈີ້ ແລະມັກຈົ່ມ

ສຸພາສິດ 25:24 ຢູ່ທີ່ແຈມຸມເທິງຫລັງຄາເຮືອນດີກວ່າຢູ່ໃນເຮືອນຮ່ວມກັບຍິງທີ່ຈູ້ຈີ້ 25 ຂ່າວດີຈາກເມືອງໄກ ກໍເຫມືອນນ້ຳເຢັນທີ່ໃຫ້ແກ່ຄົນຫິວ

ສຸພາສິດ 27:15,16 ຝົນຍ້ອຍແປະໆບໍ່ຢຸດໃນຣະດູຝົນສັນໃດ ຜູ້ຍິງທີ່ຈູ້ຈີ້ກໍເຫມືອນກັນສັນ
ນັ້ນ 16 ທີ່ຈະຍັບຍັ້ງນາງກໍເຫມືອນຍັງຍັ້ງລົມ ຫລືກຳນ້ຳມັນດ້ວຍມືຂວາ

ສຸພາສິດ 31:10-31 ເມັຽທີ່ດີຍ່ອມປະເສີດກວ່າເພັດນິນຈິນດາ ແຕ່ຍາກຫລາຍທີ່ຈະໄດ້ຍິງ
ເຊັ່ນນັ້ນ 11 ຜົວທີ່ມີເມັຽດີກໍວາງໃຈໃນນາງໄດ້ ເຂົາຈະບໍ່ເປັນທຸກເລີຍ 12 ເມັຽທີ່ດີນັ້ນ
ເປັນດັ່ງນີ້ ຄືທຳແຕ່ສິ່ງທີ່ດີຕໍ່ຜົວ ຈະບໍ່ທຳໃຫ້ຜົວເຊື່ອມເສັຽຕລອດຊີວິດ 13 ຈັດຫາຂົນ
ແກະ ຜ້າເນື້ອດີ ພ້ອມທັງເຮັດວຽກຢ່າງຈຳນິຈຳນານ 14 ຊອກຫາອາຫານຈາກບ່ອນໄກ
ມາສູ່ເຮືອນເຫມືອນເຮືອນພ່ໍຄ້າ 15 ນອນເດີກຕື່ນເຊົ້າ ເພື່ອຈັດຕຽມຫາອາຫານສຳລັບ
ຄອບຄົວ ແລະບອກວຽກໃຫ້ສາວໃຊ້ທຳ 16 ຊອກຫາທີ່ດິນເຮັດສວນອະງຸ່ນ ແລ້ວຊື້ໄວ້
ດ້ວຍເງິນທີ່ນາງຫາມາເອງ 17 ເປັນຍິງທີ່ແຂງແຮງ ມີນ້ຳໃຈແລະສຸກຂະພາບດີ 18 ຮູ້
ຈັກຄຸນຄ່າຂອງສິ່ງທີ່ຕົນທຳ 19 ເຂັນຜ້າຍ ແລະຕ່ຳຜ້າເອງ 20 ໃຫ້ຄວາມຊ່ວຍເຫລືອ
ຄົນທຸກຍາກແລະຜູ້ຂັດສົນ 21 ເມື່ອຍາມຫນາວກໍບໍ່ເດືອດຮ້ອນ ເພາະວ່ານາງມີເຄື່ອງ
ກັນຫນາວສຳລັບລູກຜົວແລ້ວ 22 ນາງຕ່ຳຜ້າປູນອນ ແລະນຸ່ງຜ້າໄຫມສີມ່ວງເນື້ອດີ
23 ຊ່ວຍໃຫ້ຜົວມີຊື່ສຽງ ແລະເປັນເຈົ້ານາຍຄົນນຶ່ງໃນປະເທດ 24 ນາງຕ່ຳເຄື່ອງນຸ່ງ
ແລະທຳສາຍແອວຂາຍໃຫ້ພວກພ່ໍຄ້າ 25 ເປັນຍິງທີ່ແຂງແຮງ ແລະຫນ້າເຄົາຣົບນັບຖື
ບໍ່ເປັນຫ່ວງຫຍັງໃນອານາຄົດ 26 ເປັນຍິງເວົ້າຈາຫວັກແຫວນ ແລະສຸພາບ
ອ່ອນຫວານ 27 ຫຍຸ້ງຢູ່ກັບວຽກ ແລະເອົາໃຈໃສ່ໃນຄວາມຕ້ອງການຂອງຄອບຄົວສເມີ
28 ລູກຜົວຂອງນາງຈະສະແດງຄວາມພໍໃຈ ແລະຍ້ອງຍໍນາງ 29 ຜົວຈະເວົ້າວ່າ, “ມີຜູ້
ຍິງຢູ່ຫລາຍຄົນເປັນເມັຽທີ່ດີ ແຕ່ເຈົ້າດີກວ່າຜູ້ຍິງທັງປວງ” 30 ສເນ່ເປັນຂອງຫລອກ
ລວງ ແລະຄວາມງາມກໍເປັນຂອງບໍ່ແນ່ນອນ ແຕ່ຜູ້ຍິງທີ່ຢາເກງພຣະຜູ້ເປັນເຈົ້າສົມ
ຄວນໄດ້ຮັບຄວາມສັຣເສີນ 31 ຍ້ອນຜົນງານທັງປວງທີ່ນາງໄດ້ທຳມານັ້ນ ຈົ່ງໃຫ້ກຽດ
ແກ່ນາງ ນາງສົມຄວນໄດ້ຮັບຄວາມເຄົາຣົບນັບຖືຈາກທຸກໆຄົນ

Pastor T. John Franklin
Church of Salvation, Healing, and Deliverance
COS-HAD.org